## ລາຍງານກອງປະຊຸມສາມັນຜູ້ຖືຫຸ້ນ ປະຈຳປີ 2017
## ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ

**ປະຊຸມໃນວັນທີ** 24/02/2017

**ສະຖານທີ່ປະຊຸມ** ຫ້ອງປະຊຸມ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ, ຕັ້ງຢູ່ເຮືອນເລກທີ 628 ໜ່ວຍ19 ຖະໜົນໄກສອນພົມວິຫານ ບ້ານ ໂພນພະເນົາ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ

**ຜູ້ເຂົ້າຮ່ວມກອງປະຊຸມ**

| | | |
|---|---|---|
| 1. MAHATHUN Holding company limited ຕ່າງໜ້າໂດຍ Mr. Chakrit NAKSORN | | |
| | ຈຳນວນຫຸ້ນທີ່ຖື | 3,386,000 ຫຸ້ນ |
| 2. ທ່ານ ນາງ ອິນທະວີໄລ ອຸດົມ | ຈຳນວນຫຸ້ນທີ່ຖື | 84,000 ຫຸ້ນ |
| ລວມ ຈຳນວນຜູ້ເຂົ້າຮ່ວມກອງປະຊຸມ 2 ທ່ານ | ຈຳນວນຫຸ້ນທີ່ຖື | 3,470,000 ຫຸ້ນ |

**ເລີ່ມກອງປະຊຸມ** ເວລາ 10:00 ໂມງ

ທ່ານ ຊາຄຣິດ ນັກສອນ ໃນຖານະປະທານສະພາບໍລິຫານຂອງບໍລິສັດ ໄດ້ກ່າວຕ້ອນຮັບຜູ້ຖືຫຸ້ນທຸກທ່ານ ແລະ ແຈ້ງໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຊາບວ່າ: ກອງປະຊຸມຜູ້ຖືຫຸ້ນໃນຄັ້ງນີ້ມີຜູ້ເຂົ້າຮ່ວມ ຈຳນວນ 2 ທ່ານ ມີຈຳນວນຫຸ້ນລວມກັນ ຈຳນວນ 3,470,000 ຫຸ້ນ ຖືວ່າຄົບຈຳນວນອົງປະຊຸມຕາມກົດໝາຍ ຈຶ່ງຂໍເປີດກອງປະຊຸມ ແລະ ດຳເນີນກອງປະຊຸມຕາມວາລະທີ່ໄດ້ແຈ້ງໄວ້ໃນໜັງສືເຊີນຜູ້ຖືຫຸ້ນເຂົ້າຮ່ວມກອງປະຊຸມ ດັ່ງນີ້:

**ວາລະທີ 1 ເລື່ອງທີ່ປະທານແຈ້ງເພື່ອຊາບ**

- ບໍ່ມີ -

**ວາລະທີ 2 ຮັບຮອງລາຍງານກອງປະຊຸມຄັ້ງທີ່ຜ່ານມາ**

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຮອງລາຍງານກອງປະຊຸມຄະນະຜູ້ຖືຫຸ້ນ ຄັ້ງປະຊຸມເມື່ອວັນທີ 24/05/2016.

**ມະຕິໃນກອງປະຊຸມ** ກອງປະຊຸມມີມະຕິຮັບຮອງລາຍງານປະຊຸມຄະນະຜູ້ຖືຫຸ້ນ ຄັ້ງປະຊຸມເມື່ອວັນທີ 24/05/2016.

**ວາລະທີ 3 ເລື່ອງທີ່ຕ້ອງຕິດຕາມ**

- ບໍ່ມີ -

**ວາລະທີ 4 ເລື່ອງສະເໜີເພື່ອໃຫ້ກອງປະຊຸມຮັບຊາບ**

ປະທານກອງປະຊຸມໄດ້ແຈ້ງໃຫ້ທີ່ປະຊຸມຮັບຊາບຄວາມຄືບໜ້າໃນການນຳບໍລິສັດເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ (LSX) ໂດຍບໍລິສັດຈະມີແຜນຍື່ນ filing ໃນປີ 2017 ນີ້.

**ມະຕິໃນກອງປະຊຸມ** ກອງປະຊຸມມີມະຕິຮັບຊາບ

**ວາລະທີ 5** **ເລື່ອງສະເໜີເພື່ອໃຫ້ກອງປະຊຸມພິຈາລະນາອະນຸມັດ**

5.1. ພິຈາລະນາຮັບຊາບຜົນການດຳເນີນງານຂອງບໍລິສັດໃນຮອບປີ 2016

ປະທານກອງປະຊຸມ ໄດ້ລາຍງານຜົນການດຳເນີນງານຂອງບໍລິສັດໃນຮອບປີ 2016 ລາຍລະອຽດຕາມເອກະສານແນບທ້າຍ ໂດຍມີເນື້ອໃນສຳຄັນ ດັ່ງນີ້:

1. ຈຳນວນສິນເຊື່ອລາຍໃໝ່ທີ່ອະນຸມັດໃນປີ ຈຳນວນ 4,713 ສັນຍາ
2. ມູນຄ່າສິນເຊື່ອລາຍໃໝ່ທີ່ອະນຸມັດໃນປີ ຈຳນວນ 46,789.2 ລ້ານກີບ
3. ກຳໄລສຸດທິຈາກການດຳເນີນການ ຈຳນວນ 5,639.4 ລ້ານກີບ

ມະຕິໃນກອງປະຊຸມ ກອງປະຊຸມມີມະຕິຮັບຊາບຜົນການດຳເນີນການຂອງບໍລິສັດໃນປີທີ່ຜ່ານມາ.

5.2. ພິຈາລະນາງົບສະແດງສະຖານະການເງິນແລະ ງົບກຳໄລຂາດທຶນທີ່ສະຫຼຸບຂອງບໍລິສັດ ສຳລັບຮອບປີບັນຊີສິ້ນສຸດໃນວັນທີ 31 ທັນວາ 2016.

ປະທານກອງປະຊຸມ ໄດ້ລາຍງານງົບສະແດງສະຖານະການເງິນ ແລະ ງົບກຳໄລຂາດທຶນທີ່ສະຫຼຸບຂອງບໍລິສັດ ລາຍລະອຽດຕາມເອກະສານງົບການເງິນແນບທ້າຍ.

**ມະຕິໃນກອງປະຊຸມ** ກອງປະຊຸມມີມະຕິຕົກລົງເຫັນດີເປັນເອກະພາບກັນອະນຸມັດງົບສະແດງຖານະທາງການເງິນ ແລະ ງົບກຳໄລຂາດທຶນທີ່ສະຫຼຸບຂອງບໍລິສັດຮອບປີບັນຊີສິ້ນສຸດວັນທີ 31 ທັນວາ 2016.

5.3. ພິຈາລະນາຈັດສັນງົບກຳໄລຂາດທຶນທີ່ສະຫຼຸບຂອງບໍລິສັດ ແລະ ຈ່າຍເງິນປັນຜົນແກ່ຜູ້ຖືຫຸ້ນປະຈຳປີ 2016.

ປະທານກອງປະຊຸມລາຍງານໃຫ້ທີ່ປະຊຸມຊາບວ່າ ຈາກຜົນການດຳເນີນການໃນປີທີ່ຜ່ານມາບໍລິສັດມີກຳໄລສຸດທິຈາກການດຳເນີນການ ຈຳນວນ 5,523,078,890 ກີບ ຈຶ່ງສະເໜີຈັດສັນງົບກຳໄລປະຈຳປີ 2016 ດັ່ງນີ້:

1. ຄັງສຳຮອງຕາມລະບຽບການ ບໍ່ຕ່ຳກ່ວາສິບສ່ວນຮ້ອຍຂອງກຳໄລສຸດທິປະຈຳປີ ຄິດເປັນຈຳນວນເງິນ 555,397,610.66 ກີບ.
2. ຈ່າຍປັນຜົນ ຫຸ້ນລະ 180 ກີບ ຈຳນວນ 3,470,000 ຫຸ້ນ ຄິດເປັນຈຳນວນເງິນ 624,600,000 ກີບ ໂດຍເງິນດັ່ງກ່າວຈະຕ້ອງຖືກຫັກ

ອາກອນປັນຜົນຮ້ອຍລະ 10 ເປັນຈຳນວນເງິນ 62,460,000 ກີບ. ຄົງເຫຼືອເງິນປັນຜົນທີ່ຈະຕ້ອງຈ່າຍໃຫ້ແກ່ຜູ້ຖືຫຸ້ນ ຈຳນວນ 562,140,000 ກີບ

**ມະຕິໃນກອງປະຊຸມ** ກອງປະຊຸມມີມະຕິຕົກລົງເຫັນດີເປັນເອກະພາບກັນ ອະນຸມັດໃຫ້ຈັດສັນກຳໄລປະຈຳປີ 2016 ຕາມທີ່ປະທານສະເໜີມາ.

## 5.4 ແຕ່ງຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ

ປະທານກອງປະຊຸມໄດ້ສະເໜີໃຫ້ບໍລິສັດແຕ່ງຕັ້ງໃຫ້ ບໍລິສັດ Deloitte (Lao) Sole Company Limited ເປັນຜູ້ກວດສອບບັນຊີ ປະຈຳປີ 2017 ໂດຍມີຄ່າຈ້າງ 7,000 USD ສຳລັບການກວດສອບເຄິ່ງປີ 2017 ແລະ 20,000 USD ສຳລັບການກວດສອບປີ 2017 ຊຶ່ງຍັງບໍ່ລວມຄ່າໃຊ້ຈ່າຍອື່ນໆ ແລະ ຍັງບໍ່ລວມພາສີມູນຄ່າເພີ່ມ.

**ມະຕິໃນກອງປະຊຸມ** ກອງປະຊຸມມີມະຕິຕົກລົງເຫັນດີເປັນເອກະພາບກັນແຕ່ງຕັ້ງບໍລິສັດ Deloitte (Lao) Sole Company Limited ເປັນຜູ້ກວດສອບບັນຊີປະຈຳປີ 2017 ໂດຍມີຄ່າຈ້າງ ຕາມທີ່ທ່ານປະທານສະເໜີ.

## 5.5 ເລືອກຕັ້ງຜູ້ອຳນວຍການ ແລະ ສະພາບໍລິຫານ

ປະທານກອງປະຊຸມ ໄດ້ແຈ້ງສະເໜີໃຫ້ທີ່ປະຊຸມຮັບຊາບວ່າ: ຍັງບໍ່ມີອຳນວຍການທ່ານໃດຄົບຮອບວາລະ 2 ປີ ຫຼື ລາອອກຈາກຕຳແໜ່ງ ຈຶ່ງບໍ່ຈຳເປັນແຕ່ງຕັ້ງກຳມະການທົດແທນ ໂດຍໃຫ້ສະພາບໍລິຫານຊຸດປະຈຸບັນດຳເນີນການບໍລິຫານຈັດການຕໍ່ໄປໂດຍມີສິດ ແລະ ໜ້າທີ່ຕາມເດີມ.

**ມະຕິໃນທີ່ປະຊຸມ** ທີ່ປະຊຸມມີມະຕິຕົກລົງເຫັນດີເປັນເອກະພາບຕາມທີ່ທ່ານປະທານສະເໜີ.

## 5.4 ຕົກລົງເບັ້ຍປະຈຳປີ, ເບັ້ຍປະຊຸມ ຫຼື ເງິນເດືອນຂອງຜູ້ອຳນວຍການ

ປະທານກອງປະຊຸມ ສະເໜີໃຫ້ທີ່ປະຊຸມພິຈາລະນາຜົນຕອບແທນຂອງຜູ້ອຳນວຍການຊຶ່ງ ໄດ້ແກ່: ເບັ້ຍປະຈຳປີ, ເບັ້ຍປະຊຸມ ຫຼື ເງິນເດືອນຂອງຜູ້ອຳນວຍການ.

**ມະຕິໃນປະຊຸມ** ທີ່ປະຊຸມມີມະຕິຕົກລົງເຫັນດີເປັນເອກະພາບກັນມອບອຳນາດໃຫ້ສະພາບໍລິຫານເປັນຜູ້ກຳນົດຄ່າເບັ້ຍປະຈຳປີ, ເບັ້ຍກອງປະຊຸມ ຫຼື ເງິນເດືອນຂອງຜູ້ອຳນວຍການ ໂດຍໃຫ້ພິຈາລະນາຕາມຜົນປະກອບການຂອງບໍລິສັດ ແຕ່ທັງນີ້ ຈຳນວນເງິນລວມທຸກປະເພດຕະຫຼອດປີ 2017 ຂອງຜົນຕອບແທນທັງໝົດຕ້ອງບໍ່ເກີນ 1,000 (ພັນ) ລ້ານກີບ ຊຶ່ງໃນຈຳນວນເງິນນີ້ບໍ່ລວມເຖິງເງິນເດືອນຄ່າຈ້າງສຳລັບຜູ້ອຳນວຍການ

ທີ່ເຮັດໜ້າທີ່ຮັບຜິດຊອບການບໍລິຫານງານປະຈໍາວັນ ແລະ ຄ່າໃຊ້ຈ່າຍຕ່າງໆ ຂອງສະມາຊິກໃນສະພາບໍລິຫານ ທີ່ຈ່າຍຕາມຄ່າໃຊ້ຈ່າຍຈິງສໍາລັບການເຂົ້າຮ່ວມກອງປະຊຸມ ໄດ້ແກ່: ຄ່າເດີນທາງ ຄ່າພັກເຊົາ ໂດຍໃຫ້ຖືເປັນຄ່າໃຊ້ຈ່າຍຂອງບໍລິສັດ.

**5.5 ຕົກລົງເງິນເດືອນຂອງພະນັກງານ**

ປະທານກອງປະຊຸມ ສະເໜີໃຫ້ທີ່ປະຊຸມພິຈາລະນາຕົກລົງເງິນເດືອນຂອງພະນັກງານ ແລະ ສະຫວັດດີການຜົນປະໂຫຍດອື່ນໆໂດຍມອບອໍານາດໃຫ້ສະພາບໍລິຫານເປັນຜູ້ແຕ່ງຕັ້ງຜູ້ບໍລິຫານ ໄດ້ແກ່ປະທານເຈົ້າໜ້າທີ່ບໍລິຫານ (Chief Executive Officer) ແລະ ຜູ້ຈັດການທົ່ວໄປ (General Manager) ແລະ ກໍານົດຄ່າຈ້າງເງິນເດືອນ ຕະຫຼອດຈົນຮອດສະຫວັດດີການອື່ນໆ.

ສ່ວນຄ່າຈ້າງເງິນເດືອນພະນັກງານໃນລະດັບອື່ນນັ້ນ ມອບອໍານາດໃຫ້ປະທານເຈົ້າໜ້າທີ່ບໍລິຫານ (Chief Executive Officer) ເປັນຜູ້ມີອໍານາດກໍານົດອັດຕາຄ່າຈ້າງເງິນເດືອນຂອງພະນັກງານ.

***ມະຕິໃນກອງປະຊຸມ*** *ທີ່ປະຊຸມມີມະຕິຕົກລົງເຫັນດີເປັນເອກະພາບກັນມອບອໍານາດໃຫ້ສະພາບໍລິຫານ ເປັນຜູ້ແຕ່ງຕັ້ງຜູ້ບໍລິຫານ ແລະ ກໍານົດຄ່າຈ້າງເງິນເດືອນ ສ່ວນພະນັກງານໃນຕໍາແໜ່ງອື່ນນັ້ນມອບອໍານາດໃຫ້ປະທານເຈົ້າໜ້າທີ່ບໍລິຫານ (Chief Executive Officer) ເປັນຜູ້ກໍານົດ.*

**ວາລະທີ່ 6 ເລື່ອງອື່ນໆ ( ຖ້າມີ )**

\- ບໍ່ມີ -

ບໍ່ມີເລື່ອງອື່ນໃດ ທ່ານປະທານກອງປະຊຸມຈຶ່ງສະເໜີໃຫ້ປິດກອງປະຊຸມໃນເວລາ 11:45 ໂມງ

**ລາຍເຊັນຮັບຮອງມະຕິກອງປະຊຸມ**

**ຜູ້ຖືຫຸ້ນຢູ່ຕ່າງປະເທດ**

( ........................................ )

Mr. Chakrit NAKSORN
MAHATHUN Holding company limited

**ຜູ້ຖືຫຸ້ນຢູ່( ສ.ປ.ປ ລາວ )**

( ........................................ )

ທ່ານ ນາງ ອິນທະວີໄລ ອຸດົມ

( ........................................ )

Mr. Manop TRIRITHVILAI
ຜູ້ບັນທຶກລາຍງານກອງປະຊຸມ